## ການປິ່ນປົວສຸຂະພາບໂຣກຈິດເອກຊົນ

ຖ້າຫາກວ່າທ່ານມີປະກັນພັຍເອກຊົນ, ທ່ານສາມາດຊື້ເອົາການບໍຣິການໂດຍກົງຈາກທ່ານຫມໍຝຶກແອບ, ທ່ານຫມໍໂຣກຈິດເອກຊົນ, ສູນກາງປິ່ນປົວສຸຂະພາບໂຣກຈິດໃນຊຸມນຸມຊົນ, ຫລື ໂຮງຫມໍຮັບຄົນເຈັບຮ້າຍແຮງ.

ຖ້າຫາກວ່າທ່ານເປັນສະມາຊິກຂອງອົງການປິ່ນປົວສຸຂະພາບ, ໂທຣະສັບໄປຫາຜູ້ຕ່າງຫນ້າຜແນກປະຊາສັມພັນຂອງທ່ານເພື່ອຣາຍລະອຽດກ່ຽວກັບການຄຸ້ມກັນສຸຂະພາບໂຣກຈິດຂອງທ່ານ.

ຖ້າຫາກວ່າທ່ານເປັນຄອບຄົວທະຫານ, ຕິດຕໍ່ໄປຫາຜູ້ຕ່າງຫນ້າຂອງ Tri-Care/Tri-West ໄດ້ທີ່ເລກ 800-404-4506 ຫລື ທີ່ www.Triwest.com.

ໂຣກຈິດໄດ້ແນວໃດ?

ຖ້າຫາກວ່າການຄຸ້ມກັນຂອງທ່ານໄດ້ຮອດຂອບເຂດຂອງມັນແລ້ວ ຫລື ທ່ານບໍ່ມີປະກັນພັຍ, ທ່ານຈະສາມາດຊື້ເອົາການບໍຣິການໄດ້ແບບຕາຕລາງຄ່າທຳນຽມເປັນຂັ້ນ. ຕິດຕໍ່ໄປຫາສາຍງານອູ້ມຊູທ້ອງຖິ່ນທີ່ຮັບໃຊ້ເຂດຂອງທ່ານສຳລັບອົງການທີ່ເອື້ອເຟື້ອການບໍຣິການແບບຕາຕລາງຄ່າທຳນຽມເປັນຂັ້ນ. ສາຍງານອູ້ມຊູທ້ອງຖິ່ນໄດ້ຖືກບົ່ງຢູ່ດ້ານຫລັງຂອງປຶ້ມຄູ່ມືຫົວນີ້. ທ່ານຍັງສາມາດຕິດຕໍ່ໄປຫາອົງການສຸຂະພາບໂຣກຈິດໄດ້ໂດຍກົງໂລດເພື່ອຈະສອບຖາມກ່ຽວກັບຕາຕລາງຄ່າທຳນຽມເປັນຂັ້ນ.

## ໂຄງການ **Washington Basic Health Plan**

ໂຄງການ Washington Basic Health Plan ມີສວັດດີການສຸຂະພາບໂຣກຈິດບາງຢ່າງ. ສອບຖາມນຳໂຄງການພະຍາບານຂອງທ່ານເພື່ອການຄຸ້ມກັນ:

| **Basic Health Plan** | ໂທຣະສັບ |
|---|---|
| Columbia United Providers | 800-315-7862 |
| Community Health Plan of Washington | 800-440-1561 |
| Group Health Cooperative | 888-901-4636 |
| Kaiser Foundation Health Plan | 800-813-2000 |
| Molina Healthcare of WA Inc. | 800-869-7165 |
| Molina Healthcare of WA Inc. | 800-691-3072 |
| Regence Blue Shield/ Asuris Northwest Health | 800-669-8791 (Regence)<br>866-240-9560 (Asuris) |

*ມັນສຳຄັນທີ່ທ່ານຈະຕ້ອງໄດ້ຖາມຜູ້ຮັບປະກັນຂອງທ່ານກ່ຽວກັບການອະນຸຍາດທີ່ຕ້ອງມີກ່ອນທີ່ຈະຊອກຫາການປິ່ນປົວປະເພດຕ່າງໆສຳລັບເດັກນ້ອຍຂອງທ່ານ.*

## ການບໍຣິການຍາມເດືອດຮ້ອນ

ການບໍຣິການຍາມເດືອດຮ້ອນກໍ່ມີໄວ້ໃຫ້ແກ່ທຸກໆຄົນໂດຍຜ່ານຣະບົບສາທາຣະນະຊົນໂດຍບໍ່ຄິດຄ່າ. ເຖິງແມ່ນວ່າທ່ານຈະມີປະກັນພັຍເອກຊົນຢູ່ກໍ່ຕາມ, ການນອນໂຮງຫມໍຂອງເດັກນ້ອຍຂອງທ່ານຢູ່ໃນໂຮງຫມໍຂອງໂຄງການນອນໂຮງຫມໍຣະຍະຍາວຂອງເດັກນ້ອຍໄດ້ຖືກອຸປຖັມໂດຍເງິນທຶນຂອງສາທາຣະນະ. ເບິ່ງຫນ້າກົງກັນຂ້າມເພື່ອຣາຍລະອຽດ.

## ສາຍງານອູ້ມຊູທ້ອງຖິ່ນ

| ສາຍງານອູ້ມຊູທ້ອງຖິ່ນ (RSN)*<br>County - ເທສບານ<br>County - ເທສບານ | ເລກໂທຣະສັບ | ໂທຣະສັບສາຍເດືອດຮ້ອນ |
|---|---|---|
| Chelan and Douglas Counties | 877-563-3678 | 800-852-2923 |
| Clark County | 800-410-1910 | 800-626-8137 |
| Grays Harbor County | 800-464-7277 | 800-685-6556 |
| Greater Columbia Counties | 800-795-9296 | 800-671-5437 |
| *Asotin* | | *888-475-5665* |
| *Benton-Franklin* | | *800-548-8761* |
| *Columbia* | | *866-382-1164* |
| *Garfield* | | *888-475-5665* |
| *Kittitas* | | *509-925-9861* |
| *Klickitat* | | *800-572-8122* |
| *Skamania* | | *509-427-3850* |
| *Toppenish* | | *800-500-1344* |
| *Walla Walla* | | *509-522-4278* |
| *Whitman* | | *866-871-6385* |
| *Yakima* | | *800-572-8122* |
| *Yakima Children* | | *800-671-5437* |
| King County | 800-790-8049 | 866-427-4747 |
| North Central Counties | 800-251-5350 | |
| *Adams (ໂທຣະສັບຮັບຈ່າຍໃຫ້)* | | *509-488-5611* |
| *Ferry* | 866-268-5105 | |
| *Grant* | | *877-467-4303* |
| *Lincoln* | | *800-767-6081* |
| *Okanogan* | | *866-826-6191* |
| *Pend Oreille* | | *866-847-8540* |
| *Stevens* | | *888-380-6823* |
| North Sound Counties<br>*Island, Skagit, San Juan, Snohomish, Whatcom* | 888-693-7200 | 800-584-3578 |
| Peninsula Counties | 800-525-5637 | |
| *East Clallam County* | | *360-452-4500* |
| *West Clallam County* | | *360-374-5011* |
| *Kitsap* | | *800-843-4793* |
| *East Jefferson County* | | *800-659-0321* |
| *West Jefferson County* | | *360-374-5011* |
| Pierce County | 800-531-0508 | 800-576-7764 |
| Cowlitz County | 800-347-6092 | 800-803-8833 |
| Spokane County | 800-273-5864 | 877-678-4428 |
| Thurston ແລະ Mason Counties | 800-624-1234 (x5585) | 800-627-2211 |
| Timberlands Counties | 800-392-6298 | |
| *Lewis* | | *800-559-6696* |
| *Pacific* | | *800-884-2298* |
| *Wahkiakum* | | *800-635-5989* |

ຜແນກສຸຂະພາບໂຣກຈິດ ... 800-446-0259
PO Box 45320 • Olympia, WA 98504-5320 • www1.dshs.wa.gov/mentalhealth/

* ຣາຍລະອຽດອັນນີ້ຈະຖືກປ່ຽນແປງ ແລະ ດັດແປງໃຫມ່ຢູ່ໃນແວບໄຊທ໌ຂອງ MHD ໃນເວລາແຕ່ລະເດືອນໄປ. www1.dshs.wa.gov/mentalhealth/rsnmap.shtml



ການບໍຣິການສຸຂະພາບໂຣກຈິດ

# ສຳລັບ ເດັກນ້ອຍ ແລະ ວັຍຫນຸ່ມ

Washington State Department of Social & Health Services
DSHS 22-644 LA (Rev. 9/06)



# ຂ້ອຍຈະຊອກຫາ ການບໍລິການສຸຂະພາບໂຣກຈິດໄດ້ແນວໃດ?

## 1 ການບໍລິການສຸຂະພາບໂຣກຈິດຂອງສາທາລະນະ

ຖ້າຫາກວ່າທ່ານໄດ້ຮັບບັດພະຍາບານເມດິແຄດທ່ານຈະຖືກຈົດຊື່ເຂົ້າໂດຍອັດຕະໂນມັດຢູ່ໃນໂຄງການປິ່ນປົວສຸຂະພາບໂຣກຈິດທີ່ຖືກຄວບຄຸມທີ່ຖືກເອີ້ນວ່າ*ສາຍງານອູ້ມຊູທ້ອງຖິ່ນ* **(RSN)**. ຖ້າຫາກວ່າທ່ານບໍ່ມີປະກັນພັຍ, ການບໍລິການສຸຂະພາບໂຣກຈິດຈະມີໃວ້ໃຫ້ແບບຕາຕລາງຄ່າທຳນຽມເປັນຂັ້ນ. ໂທຣະສັບໄປຫາ RSN ຂອງທ່ານສຳລັບທ່ານຫມໍທີ່ໃຫ້ການບໍລິການແບບຕາຕລາງຄ່າທຳນຽມເປັນຂັ້ນ.

ຖ້າຫາກວ່າທ່ານໄດ້ຮັບບັດພະຍາບານເມດິແຄດ, ທ່ານສາມາດເຂົ້າເຖິງການບໍລິການສຸຂະພາບໂຣກຈິດຈາກອົງການທີ່ຖືກອະນຸຍາດໂດຍ RSN ເທົ່ານັ້ນ. ການບໍລິການບໍ່ນອນໂຮງຫມໍ ແລະ ນອນໂຮງຫມໍຮ້າຍແຮງຕ້ອງຖືກອະນຸຍາດໂດຍ RSN ຮັບໃຊ້ໃນເຂດຂອງທ່ານ. ຖ້າຫາກວ່າທ່ານເຂົ້າເຖິງການບໍລິການຈາກຜູ້ໃຫ້ການບໍລິການທີ່ບໍ່ຖືກອານຸຍາດໂດຍ RSN, ທ່ານຈະຕ້ອງໄດ້ຮັບຜິດຊອບຈ່າຍເງິນສຳລັບຄ່າປິ່ນປົວ.

### ການບໍລິການຍາມເດືອດຮ້ອນ

ຖ້າຫາກວ່າທ່ານມີເຫດການສຸກເສີນອິ່ມຊູ່ຕໍ່ຊີວິດ, ໂທຣະສັບໄປຫາ 911. ຖ້າຫາກວ່າເດັກນ້ອຍຂອງທ່ານຕົກຢູ່ໃນພາວະເດືອດຮ້ອນກ່ຽວກັບໂຣກຈິດ, ໂທຣະສັບໄປຫາສາຍໂທຣະສັບພາວະເດືອດຮ້ອນທີ່ເຫມາະສົມສຳລັບເທສບານຂອງທ່ານທີ່ຖືກບົ່ງຢູ່ດ້ານຫລັງຂອງປຶ້ມຄູ່ມືຫົວນີ້. ການຊ່ວຍເຫລືອກໍ່ມີໃວ້ໃຫ້ຕລອດຊາວສີ່ຊົ່ວໂມງທຸກໆວັນ. ພະນັກງານສາຍໂທຣະສັບພາວະເດືອດຮ້ອນຈະຕີຣາຄາປະເມີນຜົນເບິ່ງສະພາບການ ແລະ, ຖ້າຈຳເປັນ, ຕີຣາຄາເບິ່ງເດັກນ້ອຍຂອງທ່ານ.

### ການບໍລິການບໍ່ນອນໂຮງຫມໍ

ບ່ອນທີ່ທ່ານອາສັຍຢູ່ຂຶ້ນອກວ່າອົງການປິ່ນປົວສຸຂະພາບໂຣກຈິດບ່ອນໃດຈະເອົາການບໍລິການໃຫ້ແກ່ເດັກນ້ອຍຂອງທ່ານ. ໂທຣະສັບໄປຫາ RSN ທ້ອງຖິ່ນຂອງທ່ານເພື່ອຂໍເອົາລາຍລະອຽດຕິດຕໍ່ສຳລັບອົງການສຸຂະພາບໂຣກຈິດທີ່ຮັບໃຊ້ເຂດຂອງທ່ານ. ຕິດຕໍ່ໄປຫາອົງການເພື່ອເຮັດຫມາຍນັດພົບ. ພະນັກງານຂອງອົງການຈະຕີຣາຄາເບິ່ງເດັກນ້ອຍຂອງທ່ານເພື່ອຈະພິຈາລະນາເບິ່ງວ່າເດັກນ້ອຍຂອງທ່ານມີການເຈັບປ່ວຍດ້ານໂຣກຈິດ ຫລື ບໍ່ ແລະ ສອດຄ່ອງນຳກົດບັງຄັບມີສິດໄດ້ຮັບການຊ່ວຍເຫລືອ ຫລື ບໍ່.

### ການບໍລິການນອນໂຮງຫມໍທີ່ຮ້າຍແຮງ

ການບໍລິການນອນໂຮງຫມໍທີ່ຮ້າຍແຮງໄດ້ຖືກເອົາໃຫ້ຢູ່ໃນສະພາບການສຸກເສີນເມື່ອເດັກນ້ອຍຂອງທ່ານເສັຽອົງຄະວ້າຍແຮງເກືອບເສັຽຊີວິດ ແລະ ອາດຈະເປັນອັນຕຣາຍຮ້າຍແຮງຕໍ່ຕົນເອງ ຫລື ຄົນອື່ນເນື່ອງເປັນຜົນອອກມາຈາກພະຍາດໂຣກຈິດ. ຜູ້ຊ່ຽວຊານສຸຂະພາບໂຣກຈິດ (MHP) ຈະຕີຣາຄາເບິ່ງສະພາບຂອງເດັກນ້ອຍຂອງທ່ານ ແລະ ທຳການຕັດສິນອັນນັ້ນ. ເພື່ອຈະເຂົ້າເຖິງການບໍລິການອັນນີ້, ໂທຣະສັບໄປຫາສາຍໂທຣະສັບພາວະເດືອດຮ້ອນຂອງ RSN. ຖ້າຫາກວ່າທ່ານມີສະພາບການອິ່ມຊູ່ຕໍ່ຊີວິດ, ໂທຫາ 911.

### ການບໍລິການນອນໂຮງຫມໍຣະຍະຍາວ

ການປິ່ນປົວນອນໂຮງຫມໍຣະຍະຍາວເປັນການຈັດໃຫ້ຢູ່ໂຮງຫມໍໂຣກຈິດທີ່ມີຂອບເຂດທີ່ສຸດສຳລັບເດັກນ້ອຍຢູ່ໃນຣັດນີ້. ມັນແມ່ນສຳລັບເດັກນ້ອຍທີ່ມີຄວາມຕ້ອງການປິ່ນປົວສຸຂະພາບໂຣກຈິດທີ່ຮ້າຍແຮງ ແລະ ເຂັ້ມງວດທີ່ສຸດ. ເດັກນ້ອຍຜູ້ທີ່ມີສິດໄດ້ຮັບການປິ່ນປົວນອນໂຮງຫມໍຣະຍະຍາວຕ້ອງໄດ້ຫມົດທຸກຫົນທາງທີ່ບໍ່ເຂັ້ມງວດກວ່າທຸກໆຢ່າງແລ້ວ ແລະ ສອດຄ່ອງນຳກົດເກນສຳລັບການບໍລິການຂອງຣັຖບານກາງ ແລະ ຂອງຣັດ. ສາຍງານ RSN ຈະເຮັດວຽກນຳທ່ານ ແລະ ຣະບົບອູ້ມຊູຂອງທ່ານເພື່ອຈະຕັດສິນວ່າການປິ່ນປົວນອນໂຮງຫມໍຣາຍະຍາວຕ້ອງໄດ້ມີ ຫລື ບໍ່. ຕິດຕໍ່ໄປຫາສາຍງານ RSN ຂອງທ່ານເພື່ອລາຍລະອຽດເພີ້ມເຕີມ.

## 2 ການບໍລິການບໍ່ນອນໂຮງຫມໍຂອງສາທາລະນະ

ຖ້າຫາກວ່າເດັກນ້ອຍຂອງທ່ານມີອາຍຸຕ່ຳກວ່າສິບສາມປີ, ການອະນຸຍາດຂອງທ່ານຕ້ອງໄດ້ມີສຳລັບການປິ່ນປົວ. ຖ້າຫາກວ່າເດັກນ້ອຍຂອງທ່ານອາຍຸສິບສາມປີ ຫລື ແກ່ກວ່າ, ເດັກນ້ອຍຂອງທ່ານສາມາດຂໍເອົາ ແລະ ຮັບເອົາການປິ່ນປົວໂດຍປາສຈາກຄວາມຍິນຍອມຂອງທ່ານ.

ສ່ວນໃຫຍ່ຂອງການບໍລິການສຸຂະພາບໂຣກຈິດທຸກໆຢ່າງໄດ້ຖືກເອົາໃຫ້ຢູ່ໃນຊຸມນຸມຊົນໃນແບບບໍ່ນອນໂຮງຫມໍ. ຕາມເຫັນເພີ້ມຂຶ້ນ, ການປິ່ນປົວສຸຂະພາບໂຣກຈິດບໍ່ນອນໂຮງຫມໍສຳລັບເດັກນ້ອຍ ແລະ ຊາວຫນຸ່ມກຳລັງຍ້າຍຫນີອອກໄປຈາກການປັຽມປາມຫ້ອງການຂອງທ່ານຫມໍຕາມປະເພນີ.

- ການບໍລິການຈະຖືກເອົາໃຫ້ຕາມສະຖານທີ່ຄຸ້ນເຄີຍຫລາຍໆບ່ອນເຊັ່ນວ່າເຮືອນ, ໂຮງຮຽນ ຫລື ໃນຂະນະທີ່ເຂົ້າຮ່ວມໃນກິຈກັມມ່ວນຊື່ນແນວອື່ນ.
- ພໍ່ແມ່, ແລະ ຖ້າເຫມາະສົມເດັກນ້ອຍ, ແລະ ທ່ານຫມໍຝຶກແອບຈະອອກແບບແຜນການບໍລິການຮ່ວມກັນ, ແຜນການບໍລິການຈະຕ້ອງຕອບສນອງຄວາມຕ້ອງການສ່ວນຕົວຂອງເດັກນ້ອຍ ແລະ ຄອບຄົວຂອງທ່ານ.
- ແຜນການບໍລິການຕ້ອງລວມເອົາການປະສົມຂອງການບໍລິການທາງການ ແລະ ບໍ່ເປັນທາງການເພື່ອວ່າເດັກນ້ອຍຂອງທ່ານສາມາດດຳຣົງຊີວິດຢູ່ຢ່າງສະບາຍຫລາຍເທົ່າອາດຈະເປັນໄປໄດ້ເຫມືອນກັບເດັກນ້ອຍຄົນອື່ນໆ.
- ພໍ່ແມ່ໄດ້ພົບວ່າໃຊ້ຜົນໄດ້ດີທີ່ສຸດທີ່ຈະເຂົ້າຮ່ວມໃນກຸ່ມອູ້ມຊູຊຶ່ງໄດ້ຖືກອຳນວຍຄວາມສະດວກໂດຍພໍ່ແມ່ຄົນອື່ນໆ.

*ການປິ່ນປົວຍັງຈະສາມາດລວມເອົາ:*

- ການເວົ້າລົມນຳທ່ານຫມໍຝຶກແອບ.
- ການສັ່ງຊື້ຢາ ແລະ ການກຳກັບນຳຢາ.
- ການໃຫ້ຄຳປຶກສາເປັນກຸ່ມ ແລະ ຄອບຄົວ.
- ການສຶກສາກ່ຽວກັບພະຍາດ, ແຫລ່ງຊ່ວຍເຫລືອ, ແລະ ເຣື່ອງອື່ນໆທີ່ສົນໃຈແກ່ຄອບຄົວ.
- ກຸ່ມອູ້ມຊູ ແລະ ການໃຫ້ຄວາມຊ່ວຍເຫລືອສຳລັບຄອບຄົວ.
- ການກຳກັບນຳກໍຣະນີເພື່ອຊ່ວຍເຫລືອປະສານງານການບໍລິການ.
- ການສົ່ງຕໍ່ໄປຫາອົງການຢູ່ໃນຊຸມນຸມຊົນຂອງທ່ານ.
- ການມີຄະນະທີ່ຈະອູ້ມຊູເດັກນ້ອຍ ແລະ ຄອບຄົວຂອງທ່ານ.

## 3 ການບໍລິການນອນໂຮງພະຍາບານທີ່ຮ້າຍແຮງຂອງສາທາລະນະ

ຖ້າຫາກວ່າທ່ານຫມໍ MHP ຕັດສິນວ່າເດັກນ້ອຍຂອງທ່ານຕ້ອງການນອນໂຮງຫມໍ, MHP ຈະຊ່ວຍເຫລືອທ່ານໃນການຊອກຫາໂຮງຫມໍບ່ອນທີ່ເຫມາະສົມ. ຖ້າຫາກວ່າເດັກນ້ອຍຂອງທ່ານອາຍຸຕ່ຳກວ່າສິບສາມປີ, ເດັກນ້ອຍຂອງທ່ານບໍ່ສາມາດຖືກນອນໂຮງຫມໍໂດຍປາສຈາກການອະນຸຍາດຂອງທ່ານ. ຖ້າຫາກເດັກນ້ອຍຂອງທ່ານມີອາຍຸສິບສາມປີຂຶ້ນໄປ, ການຍິນຍອມຂອງເຂົາເຈົ້າຈະຕ້ອງໄດ້ມີ.

### ການເຂົ້າໂຮງຫມໍທີ່ຖືກເລີ້ມຕົ້ນໂດຍພໍ່ແມ່:

ທ່ານຈະນຳພາເອົາເດັກນ້ອຍຕ່ຳກວ່າກະສຽນຂອງທ່ານເຂົ້າມາຫາໂຮງຫມໍຕີຣາຄາ ແລະ ປິ່ນປົວໄດ້ບ່ອນທີ່ໃຫ້ການບໍລິການສຸຂະພາບໂຣກຈິດ ແລະ ຂໍເອົາການຕີຣາຄາປະເມີນຜົນເພື່ອຈະພິຈາລະນາເບິ່ງວ່າເດັກນ້ອຍຂອງທ່ານມີພະຍາດໂຣກຈິດ ຫລື ບໍ່ ແລະ ຈະຕ້ອງການປິ່ນປົວສຸຂະພາບໂຣກຈິດບໍ່. ຖ້າຫາກວ່າທ່ານນຳພາເອົາເດັກນ້ອຍຕ່ຳກວ່າກະສຽນຂອງທ່ານເຂົ້າມາຫາໂຮງຫມໍ, ຄຳຍິນຍອມຂອງເດັກນ້ອຍຕ່ຳກວ່າກະສຽນຂອງທ່ານບໍ່ຕ້ອງມີສຳລັບການຕີຣາຄາ. ໂຮງຫມໍບໍ່ໄດ້ຖືກບັງຄັບໃຫ້ເອົາການປິ່ນປົວສຸຂະພາບໂຣກຈິດໃຫ້ເດັກນ້ອຍຂອງທ່ານແຕ່ວ່າເຂົາເຈົ້າຈະບໍ່ປະຕິເສດທີ່ຈະປິ່ນປົວເດັກນ້ອຍຂອງທ່ານໂດຍສະເພາະຍ້ອນວ່າເດັກນ້ອຍຂອງທ່ານບໍ່ໄດ້ຍິນຍອມໃນການປິ່ນປົວສຸຂະພາບໂຣກຈິດ.

ການຕີຣາຄາເພື່ອຈະພິຈາລະນາເບິ່ງເດັກນ້ອຍຂອງທ່ານມີພະຍາດໂຣກຈິດ ຫລື ບໍ່ຈະຖືກເຮັດໃຫ້ແລ້ວພາຍໃນ 24 ຊົ່ວໂມງໂດຍຜູ້ຊ່ຽວຊານດ້ານສຸຂະພາບໂຣກຈິດ. ຜູ້ຊ່ຽວຊານຈະພິຈາລະນາເບິ່ງວ່າເວລາເພີ້ມເຕີມແມ່ນຈຳເປັນບໍ່ເພື່ອຈະເຮັດໃຫ້ສຸຂະພາບຂອງເດັກນ້ອຍຂອງທ່ານທຸ່ນທ່ຽງເພື່ອວ່າຈະເຮັດການຕີຣາຄາໃຫ້ສຳເຣັດ. ຈະບໍ່ມີຈັກເທື່ອທີ່ເດັກນ້ອຍຂອງທ່ານຈະຖືກກັກຕົວໃວ້ດົນນານກວ່າ 72 ຊົ່ວໂມງສຳລັບການຕີຣາຄາ.

### ການນອນໂຮງຫມໍຕາມສມັກໃຈ:

ຖ້າຫາກວ່າເດັກນ້ອຍຂອງທ່ານອາຍຸສິບສາມປີ ຫລື ແກ່ກວ່າເດັກນ້ອຍຂອງທ່ານຈະຂໍເອົາການເຂົ້ານອນໂຮງຫມໍຕາມສມັກໃຈໄດ້ເພື່ອການປິ່ນປົວ ຫລື ປ່ຽນການເຂົ້ານອນໂຮງຫມໍຕາມບໍ່ສມັກໃຈມາເປັນການນອນໂຮງຫມໍຕາມສມັກໃຈໂດຍປາສຈາກການອະນຸຍາດຂອງທ່ານ. ເຖິງແມ່ນວ່າທ່ານຈະບໍ່ເຫັນພ້ອມນຳຄຳຕັດສິນຂອງເດັກນ້ອຍຂອງທ່ານທີ່ຈະຊອກເອົາການປິ່ນປົວ, ມັນເປັນຜົນປະໂຍດຂອງເດັກນ້ອຍຂອງທ່ານຖ້າຫາກວ່າທ່ານອູ້ມຊູສນັບສນູນເດັກນ້ອຍຂອງທ່ານຜ່ານຜ່າເວລາອັນຫຍຸ້ງຍາກອັນນີ້.

### ການນອນໂຮງຫມໍໂດຍບໍ່ສມັກໃຈ:

ຖ້າຫາກວ່າມັນຖືກພົບວ່າເດັກນ້ອຍຂອງທ່ານຕ້ອງການການປິ່ນປົວ ແລະ ບໍ່ປະສົງທີ່ຈະເຂົ້ານອນໂຮງຫມໍ, ຜູ້ຊ່ຽວຊານດ້ານສຸຂະພາບໂຣກຈິດທີ່ຖືກແຕ່ງຕັ້ງສາມາດອະນຸຍາດໃຫ້ເດັກນ້ອຍຂອງທ່ານທີ່ຈະຖືກກັກຕົວໃວ້ເຖິງເຈັດສິບສອງຊົ່ວໂມງສຳລັບການຕີຣາຄາ ແລະ ການທຸ່ນທ່ຽງ. ຖ້າຫາກວ່າໂຮງຫມໍຕັດສິນໃຈວ່າການປິ່ນປົວດຳເນີນຕໍ່ໄປແມ່ນຈຳເປັນ, ເດັກນ້ອຍຂອງທ່ານສາມາດເຫັນພ້ອມນຳຕາມສມັກໃຈໃນການປິ່ນປົວຕໍ່ໄປ ຫລື ວ່າໂຮງຫມໍສາມາດຂໍເອົາການນອນໂຮງຫມໍແບບບໍ່ສມັກໃຈ. ໂຮງຫມໍສາມາດຂໍເອົາການຟັງເຣື່ອງນຳສານສຳລັບການນອນໂຮງຫມໍເພີ້ມເຕີມອີກສິບສີ່ວັນ. ໃນທ້າຍຂອງສິບສີ່ວັນອັນນີ້, ໂຮງຫມໍຈະຍື່ນຟ້ອງຂຶ້ນສານຂໍເອົາການນອນໂຮງຫມໍຮອດ 180 ວັນ.

### ໂຮງພະຍາບານໂຣກຈິດຮ້າຍແຮງ

| | |
|---|---|
| Children's Hospital Regional Medical Center<br>4800 Sand Point Way NE<br>Seattle, WA 98105<br>206-987-2760 • toll free 866-987-2000 | Lourdes Counseling Center<br>1175 Carondelet Dr.<br>Richland, WA 99352<br>509-943-9104 |
| Fairfax Hospital<br>10200 NE 132nd St.<br>Kirkland, WA 98034<br>425-821-2000 • toll free 800-435-7221 | Sacred Heart Medical Center<br>101 West Eighth Ave.<br>Spokane, WA 99220<br>509-474-4818 |

## 4 ການບໍລິການນອນໂຮງຫມໍຣະຍະຍາວຂອງສາທາລະນະ

ການປິ່ນປົວນອນໂຮງຫມໍຣະຍະຍາວບໍ່ແມ່ນຫົນທາງແກ້ໄຂແຕ່ວ່າເປັນການເລີ້ມຕົ້ນຂອງຫົນທາງຂອງເດັກນ້ອຍຂອງທ່ານໄປສູ່ການຟຶກຟື້ນ. ການອູ້ມຊູ ແລະ ການເຂົ້າຮ່ວມຂອງທ່ານໃນການປິ່ນປົວຈະເຮັດໃຫ້ການຟຶກຟື້ນ ແລະ ການກັບຄືນມາເຮືອນຂອງເດັກນ້ອຍຂອງທ່ານໃຫ້ດີງ່າຍຂຶ້ນ.

ການບໍລິການນອນໂຮງຫມໍຣະຍະຍາວໄດ້ຖືກເອົາໃຫ້ໃນໂຮງຫມໍສີ່ບ່ອນຊຶ່ງເປັນທີ່ຮູ້ຈັກກັນວ່າເປັນໂຄງການນອນໂຮງຫມໍຣະຍະຍາວຂອງເດັກນ້ອຍ (CLIP). ເຖິງແມ່ນວ່າ CLIP ມີສະຖານທີ່ທີ່ຈະຮັບໃຊ້ເດັກນ້ອຍ ແລະ ຊາວຫນຸ່ມເກົ້າສິບເອັດຄົນໃນເວລາດຽວກັນ, ມັນຈະມີການລໍຖ້າສເມີກ່ອນການເຂົ້ານອນໂຮງຫມໍ. ຂະນິດຂອງການບໍລິການທີ່ຖືກເອົາໃຫ້ຈະລວມເອົາການຕີຣາຄາ, ການໃຊ້ຢາ, ການປິ່ນປົວຢາເສພຕິດ, ການຝຶກແອບ, ການຄວບຄຸມກໍຣະນີ, ການອູ້ມຊູ ແລະ ຊ່ວຍເຫລືອພໍ່ແມ່.

### ຫມາຍເຫດເຖິງພໍ່ແມ່

ການລ້ຽງລູກຜູ້ທີ່ມີພະຍາດເຣື່ອງຄວາມຮູ້ສຶກ, ການປະພຶດ, ຫລື ໂຣກຈິດ, ເປັນວຽກງານທີ່ຍາກທີ່ສຸດທີ່ທ່ານຈະເຄີຍມີ. ຢ່າສູ່ພະຍາຍາມເຮັດວຽກອັນນີ້ຕາມລຳພາງຕົນເອງ. ຊອກຫາພໍ່ແມ່ຄົນອື່ນຜູ້ທີ່ເຄີຍເຮັດມາແລ້ວ ແລະ ເຂົ້າໃຈໃນຄວາມຫຍຸ້ງຍາກທີ່ທ່ານກຳລັງປະເຊີນຫນ້າຢູ່. ເຂົາເຈົ້າສາມາດເອົາລາຍລະອຽດໃຫ້ແກ່ທ່ານ, ແນວຄິດ, ການອູ້ມຊູດ້ານຈິດໃຈ, ແຫລ່ງຊ່ວຍເຫລືອ ແລະ ການຊ່ວຍເຫລືອໃນການຊອກຫາຫົນທາງຂອງທ່ານຜ່ານຜ່າຣະບົບການ. ໂທຣະສັບໄປຫາ SAFE WA ໄດ້ທີ່ເລກ 1-866-300-1998, ຫລື ພະແນກສຸຂະພາບໂຣກຈິດໄດ້ທີ່ 1-800-446-0259 ext. 3